multicultural health communication

NSW GOVERNMENT Health

Lao
[DOH-7155]

## ເຊື້ອ Staphylococcus Aureus (MRSA) ທີ່ດື້ຢາ Methicillin ແມ່ນຫຍັງ?
## What Is Methicillin Resistant Staphylococcus Aureus (MRSA)?

Staphylococcus aureus (ຫຼື staph) ແມ່ນເຊື້ອແບັກທີເຣັຍທີ່ພົບຢູ່ເທິງຜິວໜັງແລະໃນດັງຂອງຄົນ. ສ່ວນໃຫຍ່ແລ້ວ staph ຈະບໍ່ເປັນພິດເປັນພັຍຫຍັງ, ແຕ່ວ່າບາງຄັ້ງມັນກໍອາດກໍ່ໃຫ້ເກີດການຕິດເຊື້ອແລະເກີດເຈັບເປັນຮ້າຍແຮງໄດ້.

ບາງພັນຂອງ staph ໄດ້ເກີດດື້ຢາຕ້ານເຊື້ອ methicillin ແລະ ຢາຕ້ານເຊື້ອຊນິດອື່ນໆ ຊຶ່ງໃຊ້ປິ່ນປົວໂຣກນີ້ ກັນມາແຕ່ກ່ອນ. ການຕິດເຊື້ອທີ່ເກີດຈາກ Staphylococcus aureus (MRSA) ຊຶ່ງດື້ຢາ methicillin ນັ້ນຍາກຕໍ່ການປິ່ນປົວ, ເພາະວ່າຢາຕ້ານເຊື້ອເກືອບທຸກຊນິດບໍ່ສາມາດຂ້າເຊື້ອແບກທີເຣັຍຊນິດນີ້ໄດ້.

### ທ່ານຕິດເຊື້ອ MRSA ໄດ້ຢ່າງໃດ?

ທ່ານສາມາດຕິດເຊື້ອ MRSA ຈາກຊຸມຊົນ ຫຼືວ່າຈາກໂຮງໝໍ ຫຼື ສະຖານດູແລສຸຂພາບແບບອື່ນໆ.

MRSA ແລະ staph ຊນິດອື່ນໆສາມາດກໍ່ໃຫ້ເກີດການຕິດເຊື້ອໄດ້ໂດຍເຂົ້າສູ່ຮ່າງກາຍຜ່ານຜິວໜັງທີ່ມີຮອຍເປີດ ຫຼື ເຂົ້າໄປໃນເສັ້ນເລືອດ. ຜູ້ທີ່ມີບັນຫາສຸຂພາບເຊັ່ນໂຣກເບົາຫວານຫຼືທີ່ພູມຕ້ານທານຕ່ຳ - ຫຼືຜູ້ທີ່ມີຜິວໜັງມີຮອຍເປີດຍ້ອນບາດແຜ, ຍ້ອນການຜ່າຕັດເມື່ອໝໍ່ໆນີ້, ຫຼືຜູ້ທີ່ເປັນໂຣກຜິວໜັງ - ຄົນເຫຼົ່ານີ້ ມີເປີເຊັນຫຼາຍກວ່າຄົນອື່ນ ວ່າຈະຕິດເຊື້ອ staph ນີ້.

MRSA ສາມາດກໍ່ໃຫ້ເກີດອາການຕ່າງໆດັ່ງນີ້:

- ຜິວໜັງຕິດເຊື້ອເຊັ່ນເຊື້ອ boils and impetigo (ຕຸ່ມໃສເປັນຈຸ້ມ);
- ຕິດເຊື້ອໃຕ້ຜິວໜັງ (cellulitis);
- ພຍາດທີ່ຮ້າຍແຮງກວ່ານັ້ນເຊັ່ນການຕິດເຊື້ອຂອງກະດູກ, ເລືອດ, ປອດ ແລະ ພາກສ່ວນອື່ນຂອງຮ່າງກາຍ.

### ຈະຮູ້ໄດ້ຢ່າງໃດວ່າທ່ານໄດ້ ຕິດເຊື້ອ MRSA ແລ້ວ?

ທ່ານໝໍຈະຕ້ອຍເອົາຊິ້ນສ່ວນນ້ອຍໆຫຼືຕົວຢ່າງຈາກຕຸ່ມໃສພອງ, ບາດແຜ, ຫຼືຈາກບ່ອນຕິດເຊື້ອອື່ນໆ. ຕົວຢ່າງເຫຼົ່ານີ້ຈະຖືກສົ່ງໄປຫ້ອງລົດລອງເພື່ອກວດຫາເຊື້ອ.

## ຈະປິ່ນປົວການຕິດເຊື້ອ MRSA ໄດ້ຢ່າງໃດ?

MRSA ສາມາດປິ່ນປົວໄດ້ດ້ວຍຢາຕ້ານເຊື້ອຊະນິດພິເສດ. ການປິ່ນປົວແບບອື່ນໆກໍມີເຊັ່ນ ການລ້າງແຜ, ແລະ ສັນຍະກັມ, ແລ້ວແຕ່ຊະນິດຂອງການຕິດເຊື້ອ. ທ່ານໝໍຂອງທ່ານຈະແນະນຳເຖິງວິທີການປິ່ນປົວທີ່ດີທີ່ສຸດຕໍ່ຊະນິດຂອງການຕິດເຊື້ອ.

## MRSA ແຜ່ພາຍໄດ້ຢ່າງໃດ?

MRSA ສາມາດແຜ່ພາຍໄດ້ໂດຍ:

- ການບາຍຫຼືບີບພາກສ່ວນຂອງຮ່າງກາຍທີ່ຕິດເຊື້ອ, ເຊັ່ນ ຕຸ່ມໃສຫຼືແຜ;
- ໃຊ້ຜ້າເຊັດໂຕເປື້ອນ, ເຄື່ອງນຸ່ງຫຼືຜ້າປູບ່ອນຊຶ່ງມີຄົນຕິດເຊື້ອ MRSA ໃຊ້ມາກ່ອນ;
- ໃຊ້ອຸປກອນສຳລັບແຕ່ງແລະຕັດຊຶ່ງຄົນຕິດເຊື້ອ MRSA ໃຊ້ມາກ່ອນ;
- ລ້າງມືບໍ່ສະອາດດີ.

## ທ່ານຈະປ້ອງກັນການແຜ່ພາຍເຊື້ອ MRSA ໄດ້ຢ່າງໃດ?

ໃຫ້ລ້າງມື.

ການລ້າງມືເປັນສິ່ງສຳຄັນທີ່ສຸດໃນການປ້ອງກັນການແຜ່ພາຍຂອງເຊື້ອ MRSA.

## ໃຫ້ລ້າງມື:

- ກ່ອນແລະຫຼັງຈາກບາຍຫຼືແຕ່ງແຜບ່ອນທີ່ຕິດເຊື້ອ;
- ຫຼັງຈາກເຂົ້າຫ້ອງນ້ຳ;
- ຫຼັງຈາກສັ່ງຂີ້ມູກ;
- ກ່ອນຈັບບາຍຫຼືກິນອາຫານ;
- ກ່ອນຈັບບາຍເດັກເກີດໃໝ່;
- ຫຼັງຈາກບາຍຫຼືຈັບເຄື່ອງນຸ່ງຫຼືຜ້າປູບ່ອນທີ່ບໍ່ທັນຊັກ.

## ຂ້ອຍຄວນລ້າງມືຢ່າງໃດ?

ໃຫ້ລ້າງທຸກພາກສ່ວນຂອງມືໃຫ້ສະອາດດີ ໂດຍໃຊ້ສະບູ ແລະ ນ້ຳກ໊ອກ. ໃຫ້ໄລໃຫ້ສະອາດແລະເຊັດມືໃຫ້ແຫ້ງຫຼັງຈາກລ້າງມືແລ້ວ.

## ໃຫ້ປິດຕຸ່ມໃສແລະຜິວໜັງທີ່ຕິດເຊື້ອອື່ນໆ

ໃຫ້ປິດຕຸ່ມໃສແລະຜິວໜັງທີ່ຕິດເຊື້ອອື່ນໆດ້ວຍຜ້າພັນແຜກັນນ້ຳ ໃນເວລາກາງເວັນ. ເດັກນ້ອຍທີ່ເປັນ impetigo (ຕຸ່ມໃສນ້ອຍໆຫຼືຕຸ່ມຫົວແປສີເຫຼືອງຄ້າຍນ້ຳເຜິ້ງ ຢູ່ຕາມຜິວໜັງ, ຊຶ່ງເກີດຂຶ້ນຈາກເຊື້ອແບັກທີເຣັຍ Staphylococcus ຫຼື Streptococcus) ບໍ່ຄວນໄປໂຮງຮຽນຫຼືໄປສູນດູແລເດັກຈົນກວ່າຫຼັງຈາກໄດ້ປົວໂຣກນີ້ໃຫ້ຄົບມື້ນຶ່ງເສັຍກ່ອນ.

**ຢ່າໃຊ້ສິ່ງຂອງເຫຼົ່ານີ້ຮ່ວມກັນ:**

- ຜ້າເຊັດໂຕ, ເຄື່ອງນຸ່ງ ຫຼື ຜ້າປູບ່ອນເປື້ອນ. ຖ້າທ່ານໃຊ້ຕຽງຮ່ວມກັບຄົນອື່ນ, ໃຫ້ພັນຕຸ່ມ ຫຼືແຜ ໄວ້ຍາມກາງຄືນ;
- ອຸປກອນແຕ່ງແລະຕັດ ເຊັ່ນມີດຕັດເລັບ, ແໜບ, ມີດແຖ ແລະ ແປງຖູແຂ້ວ.

ໃຫ້ຊັກຜ້າເຊັດໂຕ, ເຄື່ອງນຸ່ງ, ຜ້າປູບ່ອນ ແລະ ສິ່ງຂອງຢ່າງອື່ນທີ່ອາດເປື້ອນໜອງຫຼື MRSA ໂດຍໃຊ້ຈັກຊັກເຄື່ອງ. ບໍ່ໄດ້ມີການແນະນຳວ່າຈຳເປັນຕ້ອງຊັກດ້ວຍນ້ຳທີ່ມີອຸນຫະພູມຮອ້ນເປັນພິເສດແຕ່ຢ່າງໃດ. ໃຫ້ຕາກເຄື່ອງນຸ່ງແລະຜ້າປູບ່ອນພາຍໃຕ້ແສງແດດໂດຍຕົງ, ຖ້າເປັນໄປໄດ້, ເພາະວ່າແສງແດດຈະຂ້າເຊື້ອແບັກທີເຣັຍໄດ້. ເຄື່ອງມືສຳລັບຕັກກິນ ແລະ ຖ້ວຍຊາມສາມາດລ້າງໄດ້ຕາມແບບທັມມະດາ.

## ຣາຍລະອຽດເພີ້ມເຕີມ - ພແນກສາທາຣະນະສຸກແຫ່ງຣັດ NSW



**1300 066 055** www.health.nsw.gov.au